## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 5 ພຶສຈິກາ 2023 (11-5-2023)

---

## ພຣະເຢຊູເປັນທາງດຽວທີ່ໄປຫາພຣະເຈົ້າບໍ່?

**ຈຸດສຳຄັນໃນບົດຮຽນ:** ເພາະພຣະເຢຊູເປັນພຣະບຸດຂອງພຣະເຈົ້າ, ພຣະອົງພຽງຜູ້ດຽວທີ່ສາມາດນຳເຮົາໄປສູ່ພຣະເຈົ້າ.

**ພຣະຄຳພີຕອບສນອງຊີວິດ.**

ພວກເຮົາທຸກຄົນສາມາດມີໃຈຄັບແຄບກ່ຽວກັບບາງສິ່ງບາງຢ່າງ. ມັນເປັນເຣື່ອງຕລົກທີ່ໄດ້ຍິນບາງຄົນຢືນຢັນວ່າຢູ່ເທິງທາງດ່ວນ 231 ແລ້ວຈະເຮັດໃຫ້ທ່ານໄປຮອດຈຸດໝາຍໄວຂຶ້ນເມື່ອທ່ານຫາກໝັ້ນໃຈວ່າການໃຊ້ທາງນ້ອຍຫຼາຍເສັ້ນມັນກໍຊ່ວຍປຢັດເວລາ. ຄົນເຮົາສາມາດໃສ່ໃຈ-ໃຈທີ່ຄັບແຄບ-ຈົນບໍ່ສາມາດເຫັນຂໍ້ໄດ້ປຽບໃນເສັ້ນທາງອື່ນ. ຄຣິສະຕຽນມັກຈະຖືກກ່າວຫາວ່າເປັນຄົນທີ່ມີຈິດໃຈຄັບແຄບ. ການກ່າວຫາວ່າຊາວຄຣິສະຕຽນບໍ່ມີຄວາມອົດທົນຕໍ່ຄວາມເຊື່ອຂອງຄົນອື່ນ. ຊາວຄຣິສະຕຽນເວົ້າຢ່າງໜັກແໜ້ນກ່ຽວກັບຄວາມເຊື່ອຂອງພວກເຂົາທີ່ວ່າພຣະເຢຊູຄຣິດເປັນທາງດຽວທີ່ໄປຫາພຣະເຈົ້າ, ແຕ່ວ່າມັນບໍ່ມີເລີຍອັນທີ່ວ່າໃຈບໍ່ຄັບແຄບນັ້ນ, ທຸກໆຄວາມເຊື່ອທີ່ປາກົດໃຫ້ເຫັນລ້ວນແຕ່ມີຈິດໃຈຄັບແຄບເພາະມັນບໍ່ໄດ້ລວມເອົາຄວາມເຊື່ອທີ່ບໍ່ກົງກັບຄຳສອນຂອງຕົນເອງ.

- ພວກທີ່ບໍ່ເຊື່ອວ່າມີພຣະເຈົ້າ ກໍມີຈິດໃຈຄັບແຄບຕໍ່ພວກທີ່ເຊື່ອໃນພຣະເຈົ້າ.
- ພວກທີ່ເຊື່ອໃນວິນຍານຜູດຜີຕ່າງໆ ກໍມີໃຈຄັບແຄບຕໍ່ພວກທີ່ເຊື່ອໃນພຣະເຈົ້າອົງດຽວເທົ່ານັ້ນ.
- ພວກທີ່ເຊື່ອວ່າທຸກສິ່ງຢ່າງເປັນພຣະເຈົ້າ ກໍມີຈິດໃຈຄັບແຄບຕໍ່ພວກທີ່ບໍ່ເຊື່ອໃນພະລັງຊີວິດທີ່ຂາດບຸຂລິກລັກສນະ.

ທຸກໆຄົນແມ່ນມີຈິດໃຈຄັບແຄບ, ຄຳຖາມບໍ່ແມ່ນວ່າພວກເຮົາມີຈິດໃຈຄັບແຄບຫຼືບໍ່, ແຕ່ແມ່ນຄວາມເຊື່ອແຄບຂອງພວກເຮົາເປັນຕົວແທນຂອງຄວາມຈິງຫຼືບໍ່, ອັຄສາວົກໂຢຮັນຊີ້ໃຫ້ພວກເຮົາເຫັນຄວາມຄິດຄັບແຄບທີ່ຖືກຕ້ອງ.

*ເມື່ອໃດທີ່ທ່ານມີຄວາມຫວັງວ່າທ່ານຍັງມີເສັ້ນທາງອື່ນອີກທີ່ຈະໄປ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ສຶກສາພຣະຄັມພີ

### 1. 1 ໂຢຮັນ 5:1-5

*1. ຜູ້ໃດທີ່ເຊື່ອວ່າພຣະເຢຊູຊົງເປັນພຣະຄຣິດຜູ້ນັ້ນກໍເກີດຈາກພຣະເຈົ້າທຸກຄົນທີ່ຮັກພຣະເຈົ້າຜູ້ຊົງໃຫ້ກຳເນີດຜູ້ນັ້ນກໍຮັກລູກຂອງພຣະອົງເໝືອນກັນ. 2. ໂດຍຂໍ້ນີ້ແຫຼະ, ເຮົາທັງຫລາຍຈຶ່ງຮູ້ວ່າພວກເຮົາຮັກລູກທັງຫລາຍຂອງພຣະເຈົ້າຄື ເມື່ອພວກເຮົາຮັກພຣະເຈົ້າແລະຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ. 3. ເພາະນີ້ແຫລະ, ເປັນຄວາມຮັກຕໍ່ພຣະເຈົ້າຄື ໃຫ້ເຮົາທັງຫລາຍຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງແລະຂໍ້ບັນຍັດຂອງພຣະອົງນັ້ນກໍບໍ່ຍາກໜັກ. 4. ເພາະທຸກຄົນທີ່ເກີດຈາກພຣະເຈົ້າກໍມີຊັຍຕໍ່ໂລກແລະຄວາມເຊື່ອຂອງພວກເຮົານີ້ແຫຼະເປັນຊັຍຊະນະທີ່ຊະນະຕໍ່ໂລກ. 5. ໃຜທໍ່ທີ່ຊັຍຊະນະຕໍ່ໂລກຖ້າບໍ່ແມ່ນຜູ້ທີ່ເຊື່ອວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ.*

ທຸກຄົນມີວິທີທີ່ເຂົາເຈົ້າຄິດວ່າຄວາມເປັນຈິງແມ່ນຕ້ອງມີໂຄງສ້າງແລະຄວາມເຂົ້າໃຈໄດ້.

- <u>ພວກເຊື່ອວ່າບໍ່ມີພຣະເຈົ້າ</u>ກໍເຊື່ອວ່າໂລກຈັກກະວານເປັນທັມມະຊາດ, ເປັນໄປຕາມກົດເກນທັມມະຊາດ.
- <u>ພວກເຊື່ອວິນຍານຜູດຜີຕ່າງໆ</u>ກໍເຊື່ອວ່າມະນຸດຢູ່ໃນໂລກທັມມະຊາດມີການພົວພັນກັນໃນຄວາມສຳພັນແບບການເອື້ອອຳນວຍເຊິ່ງກັນແລະກັນ-ຄວາມສຳພັນທີ່ມີປໂຍດຕໍ່ກັນ-ກັບພວກເທບພະເຈົ້າຕ່າງໆແລະວິນຍານທັງປວງໃນໂລກແຫ່ງວິນຍານ.
- <u>ພວກເຊື່ອວ່າທຸກສິ່ງຢ່າງເປັນພຣະເຈົ້າ,</u> ເຊື່ອວ່າຄວາມເປັນຈິງທັງໝົດແມ່ນປະກອບດ້ວຍການສະແດງອອກທີ່ແຕກຕ່າງກັນຂອງເນື້ອໃຈອັນດຽວກັນ, ແລະວ່າທຸກສິ່ງທຸກຢ່າງໃນທຸກສ່ວນຂອງຄວາມເປັນຈິງແມ່ນສ່ວນນຶ່ງຂອງພະລັງຊີວິດທົ່ວໄປ.

• <u>ຄົນທີ່ບໍ່ເປັນຄຣິສະຕຽນ</u>ເຊື່ອວ່າມີພະເຈົ້າດຽວ, ແຕ່ເປັນພະເຈົ້າອົງທີ່ແຕກຕ່າງຈາກພຣະເຈົ້າທີ່ຖືກເປີດເຜີຍໃນພຣະຄັມພີ.

ການມີຄວາມຮູ້ນີ້ແມ່ນສຳຄັນເພາະວ່າທຸກໆຄວາມເຊື່ອກ່ຽວກັບໂຄງສ້າງຂອງຄວາມເປັນຈິງແມ່ນມາພ້ອມກັບຄວາມເຊື່ອຂອງມັນເອງກ່ຽວກັບຄວາມລອດພົ້ນ. ແນ່ນອນ, ຫຼາຍໆສາສນາທີ່ບໍ່ແມ່ນຄຣິສະຕຽນບໍ່ໄດ້ອ້າງເຖິງຄວາມເຊື່ອຂອງເຂົາກ່ຽວກັບຄວາມລອດພົ້ນໂດຍການໃຊ້ຄຳວ່າ "ຄວາມລອດ." ແທນທີ່ຈະເປັນຢ່າງນັ້ນ, ພວກເຂົາອ້າງວ່າ "ມັນເປັນສິ່ງທີ່ສູງສຸດທີ່ຄົນເຮົາຈະສາມາດບັນລຸໄດ້ໃນຊີວິດ." ໃນຂນະທີ່ມັນເປັນສິ່ງທີ່ສຳຄັນທີ່ຈະເຂົ້າໃຈວ່າລະບົບຄວາມເຊື່ອອື່ນໆສະແດງຄວາມເຊື່ອແຄບໆຂອງຄວາມເຂົ້າໃຈກ່ຽວກັບເປົ້າໝາຍສູງສຸດທີ່ຄົນເຮົາສາມາດມີໃນຊີວິດ. ໃນຖານະທີ່ເປັນຊາວຄຣິສະຕຽນ, ພວກເຮົາຈຳເປັນຕ້ອງເລີ່ມຕົ້ນດ້ວຍການເຂົ້າໃຈຄວາມເຊື່ອຂອງຕົນເອງ. ແຕ່ຫຼັງຈາກນັ້ນພວກເຮົາມີບາງສິ່ງບາງຢ່າງທີ່ຈະປຽບທຽບກັບຄວາມເຊື່ອອື່ນໆ. ພຣະຄັມພີໄດ້ກ່າວໄວ້ຢ່າງຊັດເຈນກ່ຽວກັບຄວາມພົ້ນ, ແລະພວກເຮົາເຫັນວ່າໃນ 1 ໂຢຮັນ 5:1-5. ຄວາມລອດຂອງຄຣິສະຕຽນແມ່ນເປັນແນວຄວາມຄິດທີ່ກ້ວາງກ່ວາຄວາມເຂົ້າໃຈຂອງຄຣິສະຕຽນ. ມັນຫຼາຍກ່ວາການຕ້ອງຮັບເອົາພຣະຄຣິດເຂົ້າມາໃນຊີວິດ. ໃນຈຸດນີ້ມັນເປັນພຽງການເລີ່ມຕົ້ນຄວາມລອດພົ້ນ, ມັນຍັງບໍ່ຄົບສົມບູນເທື່ອ. ຄວາມພົ້ນຂອງຄຣິສະຕຽນບໍ່ແມ່ນເຫດປາກົດການອັນນຶ່ງ, ມັນເປັນຂັ້ນຕອນ.

• **ການຊອບທັມ.** ຈຸດເລີ່ມຕົ້ນຂອງຂັ້ນຕອນແຫ່ງຄວາມລອດພົ້ນທີ່ເອີ້ນວ່າຄວາມຊອບທັມ. ແລະໂຢຮັນໄດ້ກ່າວເຖິງເຣື່ອງນີ້ໃນຂໍ້ທີນຶ່ງ. ການ "ເກີດຈາກພຣະເຈົ້າ" (ພົ້ນແລ້ວ) ມາທາງຄວາມເຊື່ອທີ່ວ່າ "ພຣະເຢຊູເປັນພຣະຄຣິດ." ໃນຂໍ້ 5, ໂຢຮັນໄດ້ກ່າວເຖິງຊາວຄຣິສະຕຽນວ່າ "ຜູ້ທີ່ເຊື່ອວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ." ແນວຄວາມຄິດໃນພຣະຄັມພີ "ການເຊື່ອ" ບໍ່ແມ່ນແຕ່ການຍອມຮັບທາງສະຕິປັນຍາຕໍ່ທາງຄວາມຄິດ. ມັນເປັນປະສົບການຂອງການມີສາຍສັມພັນສ່ວນຕົວກັບພຣະເຈົ້າໂດຍແທ້, ເປັນພຣະເຈົ້າສ່ວນຕົວ. ມັນແມ່ນການເຂົ້າໃນຈຸດເລີ່ມຕົ້ນຂອງຂັ້ນຕອນແຫ່ງຄວາມລອດພົ້ນ.

• **ການຊຳລະລ້າງ.** ຄວາມລອດບໍ່ໄດ້ຈົບລົງດ້ວຍການຊອບທັມ. ໃຫ້ຄິດເບິ່ງຄວາມສັມພັນໃນການແຕ່ງງານ. ການເຂົ້າພິທີການແຕ່ງງານອາດຈະເລີ່ມຕົ້ນດ້ວຍການຕົກລົງແຕ່ງງານກັນ, ແຕ່ຫຼັງຈາກນັ້ນຄູ່ຜົວເມັຽຕ້ອງມີຄວາມສັມພັນເຊິ່ງກັນແລະກັນໄປຕລອດຊີວິດຂອງພວກເຂົາ. ປຽບເໝືອນກັບຊີວິດຄຣິສະຕຽນ. ພວກເຮົາເຂົ້າມາມີຄວາມສັມພັນກັບພຣະຄຣິດໂດຍການເຊື້ອເຊີນເອົາພຣະອົງໃຫ້ເຂົ້າມາໃນຊີວິດຂອງພວກເຮົາ, ແລ້ວຫຼັງຈາກນັ້ນພວກເຮົາຕ້ອງຢູ່ໃນຄວາມສັມພັນອັນນັ້ນຕລອດໄປ. ສ່ວນຂັ້ນຕອນແຫ່ງຄວາມລອດພົ້ນທີ່ສູງສຸດໃນຈຸດນີ້ເອີ້ນວ່າ "ການຊຳລະລ້າງ." ມັນສະແດງອອກໂດຍການເຕີບໂຕທາງຝ່າຍຈິດວິນຍານຢ່າງຕໍ່ເນື່ອງໃນຄວາມສັມພັນຂອງບຸກຄົນກັບພຣະເຈົ້າ. ການຊຳລະລ້າງຂອງພວກເຮົາ-"ການເຕີບໂຕຂອງພວກເຮົາ." ໃນຄວາມລອດທີ່ພຣະເຢຊູມອບໃຫ້-ແມ່ນປະສົບການທີ່ພວກເຮົາຮັກ "ພຣະເຈົ້າແລະເຊື່ອຟັງຄຳສັ່ງສອນຂອງພຣະອົງ." ການເຊື່ອຟັງຂອງພວກເຮົາສະແດງໃຫ້ເຫັນຄວາມຮັກທີ່ພວກເຮົາມີຕໍ່ພຣະເຈົ້າ. ໃນຂໍ້ທີສີ່, ໂຢຮັນໄດ້ກ່າວເຖິງການເອົາຊະນະຕໍ່ໂລກ. ນີ້ແມ່ນການສະແດງອອກໃຫ້ເຫັນວ່າພຣະເຈົ້າໄດ້ທຳງານຢູ່ໃນຊີວິດຂອງບຸກຄົນໃນພຣະປະສົງຂອງພຣະອົງ. ຄວາມລອດບໍ່ພຽງແຕ່ເປັນການກ່າວຄຳອະທິຖານແລະຮັບບັບຕິສະມາເທົ່ານັ້ນ, ແຕ່ມັນເປັນຊີວິດທີ່ມີການປ່ຽນແປງຢ່າງເຫັນໄດ້ຊັດເຈນ, ຜ່ານສາຍສັມພັນສ່ວນຕົວກັບພຣະເຈົ້າເອງ.

*ທ່ານຄິດວ່າເປັນຫຍັງຄົນຈຶ່ງເຊື່ອວ່າມີຫຼາຍທາງໄປຫາພຣະເຈົ້າ?*

## 2. 1 ໂຢຮັນ 5:6-10

*6. ນີ້ແຫລະ, ຄືຜູ້ທີ່ໄດ້ມາໂດຍນ້ຳແລະພຣະໂລຫິດ ຄືພຣະເຢຊູຄຣິດ ບໍ່ແມ່ນດ້ວຍນ້ຳສິ່ງດຽວແຕ່ດ້ວຍນ້ຳແລະພຣະໂລຫິດ ແລະພຣະວິນຍານຊົງເປັນພຍານ ເພາະພຣະວິນຍານຊົງເປັນຄວາມຈິງ. 7. ມີພຍານຢູ່ສາມປະການຄື, 8. ພຣະວິນຍານ, ນ້ຳ, ແລະພຣະໂລຫິດ ແລະພຍານທັງສາມນີ້ສອດຄ້ອງກັນ. 9. ຖ້າເຮົາທັງຫລາຍຮັບພຍານຫລັກຖານຂອງມະນຸດ ພຍານຫຼັກຖານຂອງພຣະເຈົ້າກໍໃຫຍ່ກວ່າ ເພາະວ່ານີ້ແຫຼະ, ພຍານຫຼັກຖານຂອງພຣະເຈົ້າ ຄືພຣະອົງໄດ້ຊົງເປັນພຍານອ້າງເຖິງພຣະບຸດຂອງພຣະອົງ. 10. ຜູ້ທີ່ເຊື່ອໃນພຣະບຸດຂອງພຣະເຈົ້າ ກໍມີພຍານຢູ່ໃນຕົວເອງ ຜູ້ທີ່ບໍ່ເຊື່ອພຣະເຈົ້າກໍໄດ້ເຮັດໃຫ້ພຣະອົງເປັນຜູ້ຕົວະ ເພາະຕົນບໍ່ໄດ້ເຊື່ອຄຳພຍານທີ່ພຣະເຈົ້າໄດ້ຊົງເປັນພຍານອ້າງເຖິງ ພຣະບຸດຂອງພຣະອົງ.*

ເມື່ອຄົ້ນຄວ້າຫາຄວາມຈິງກ່ຽວກັບສິ່ງໃດກໍຕາມ, ພວກເຮົາຕ້ອງພິຈາລະນາເບິ່ງວ່າມີຫຼັກຖານອັນໃດແດ່ທີ່ຈະສຳຮອງຂໍ້ສລຸບຂອງ

ພວກເຮົາ. ເມື່ອເຂົ້າມາເຖິງການສຶກສາຄົ້ນຄວ້າທາງໂລກກາຍຍະພາບ, ກໍຈະມີບາງວິທີທາງວິທະຍາສາດໃນການຄົ້ນຄວ້າ. ແຕ່, ເມື່ອມາເຖິງການພິສູດຄວາມຈິງທາງຝ່າຍວິນຍານ, ມັນບໍ່ມີເຄື່ອງພິສູດ, ແຕ່ວ່າມັນຍັງມີຫຼັກຖານທີ່ສາມາດນຳມາສຶກສາໄດ້. ດັ່ງນັ້ນ, ກ່ຽວເຣື່ອງພຣະເຢຊູເດ? ຄວາມເຊື່ອທີ່ແຕກຕ່າງກັນເວົ້າກ່ຽວກັບພຣະອົງແນວໃດ, ແລະເຂົາມີຫຼັກຖານອັນໃດແດ່ຕໍ່ຄວາມເຊື່ອຂອງເຂົາ?

- ພວກນັກທັມມະຊາດ, <u>ຜູ້ທີ່ບໍ່ເຊື່ອໃນພຣະເຈົ້າ</u>, ໂດຍທົ່ວໄປແລ້ວຈະຮັບຮູ້ປະວັດສາດຂອງຊາຍຄົນນຶ່ງທີ່ເອີ້ນວ່າພຣະເຢຊູ, ແຕ່ພວກເຂົາເຊື່ອວ່າພຣະອົງເປັນພຽງແຕ່ມະນຸດທັມມະດາເທົ່ານັ້ນ, ພວກເຂົາບໍ່ມີຫຼັກຖານອັນໃດທີ່ຈະເຮັດໃຫ້ເຂົາເຊື່ອວ່າພຣະເຢຊູບໍ່ມີຫຍັງຫຼາຍໄປກວ່າການເປັນມະນຸດຜູ້ນຶ່ງ.
- <u>ພວກຖືວິນຍານຜູດຜີຕ່າງໆ</u>ຖືວ່າພຣະເຢຊູເປັນວິນຍານຂອງບັນພະບຸລຸດ, ແຕ່ຜູ້ທີ່ເຊື່ອໃນເຣື່ອງນີ້ບໍ່ມີຫຼັກຖານໃດໆທີ່ຈະຢືນຢັນຕໍ່ຄວາມເຊື່ອຂອງພວກເຂົາໄດ້.
- <u>ພວກທີ່ເຊື່ອທຸກສິ່ງຢ່າງແມ່ນພຣະເຈົ້າ</u>ເຊື່ອວ່າພຣະເຢຊູເປັນພຽງຜູ້ຊາຍຄົນນຶ່ງທີ່ໄດ້ບັນລຸຈຸດສູງສຸດຂອງການຮູ້ແຈ້ງເຫັນຈິງທີ່ມະນຸດສາມາດບັນລຸໄດ້. ຄວາມເຊື່ອຂອງພວກນີ້ເຂົາຍັງບໍ່ມີຂໍ້ຢືນຢັນພໍເປັນຂໍ້ມູນໄດ້.
- <u>ພວກທີ່ບໍ່ແມ່ນຄຣິສຕຽນ</u>ຖືວ່າພຣະເຢຊູເປັນຜູ້ປະກາດພຣະທັມຫຼືຜູ້ມີຄວາມສະຫລ່າງຮູ້ທີ່ພຣະເຈົ້າສົ່ງມາຍັງແຜ່ນດິນໂລກເພື່ອເຮັດໜ້າທີ່ສະເພາະ, ເຊັ່ນດຽວກັນກັບລະບົບຄວາມເຊື່ອອື່ນໆ, ພວກເຂົາບໍ່ມີຂໍ້ມູນທີ່ຢືນຢັນຮັບຮອງຂໍ້ມູນສິ່ງທີ່ພວກເຂົາເຊື່ອ.

ຫຼາຍຄົນໂຕ້ຖຽງກັນວ່າ, ນັບຕັ້ງແຕ່ຊາວຄຣິສະຕຽນເຊື່ອວ່າພຣະເຢຊູເປັນພຣະເຈົ້າໃນເນື້ອໜັງແມ່ນອີງໃສ່ຄວາມເຊື່ອເປັນພື້ນຖານສູງສຸດ, ມັນບໍ່ມີຫຼັກຖານໃດໆທີ່ຈະສນັບສນູນສິ່ງນັ້ນ. ແຕ່ວ່າ, ມັນບໍ່ຖືກແລ້ວ. ໃນຂນະທີ່ບໍ່ມີການຢືນຢັນທາງວິທະຍາສາດ, ຫຼັກຖານທີ່ຖືກຕ້ອງກໍ່ຍັງມີຢູ່, ຫຼັກຖານສຳລັບການນີ້ແມ່ນພົບເຫັນທັງມີບັນທຶກໄວ້ໃນປວັດຕິສາດແລະປະສົບການສ່ວນຕົວຂອງປະຊາຊົນຜູ້ມາຮູ້ຈັກກັບພຣະເຢຊູໃນຄວາມສັມພັນສ່ວນຕົວ. ໂຢຮັນໄດ້ບັນທຶກໄວ້ໃນ 1 ໂຢຮັນ 5:6-10. ໂຢຮັນໃຊ້ຄຳວ່າ "ນ້ຳແລະໂລຫິດ." ນີ້ແມ່ນການອ້າງອີງເຖິງການປະຕິບັດຂອງສາທາລະນະຊົນທີ່ເລີ່ມໃນພຣະຄຣິດດ້ວຍການຮັບບັບຕິສະມາເຂົ້າໃນພຣະອົງ (ນ້ຳ) ແລະສິ້ນສຸດລົງດ້ວຍການຄຶງຂອງພຣະອົງ(ໂລຫິດ) ໂຢຮັນໄດ້ເນັ້ນເຖິງການຕາຍຂອງພຣະຄຣິດໂດຍກ່າວວ່າ "ບໍ່ແມ່ນໂດຍນ້ຳເທົ່ານັ້ນ ແຕ່ໂດຍນ້ຳແລະໂລຫິດ." ທ່ານໄດ້ເວົ້າສິ່ງນີ້ບໍ່ພຽງແຕ່ເພື່ອອະທິບາຍເຖິງຄວາມສຳຄັນທາງວິນຍານຂອງການສິ້ນພຣະຊົນຂອງພຣະຄຣິດ, ແຕ່ຍັງເນັ້ນໜັກເຖິງຄວາມເລີ່ມຕົ້ນທາງປວັດສາດຂອງສິ່ງທີ່ພຣະຄຣິດໄດ້ເຮັດໃນເວລາທີ່ພຣະອົງໄດ້ເຂົ້າມາໃນແຜ່ນດິນໂລກ. ການບັນທຶກຂອງໂຢຮັນເປັນພຍານວ່າພຣະເຢຊູບໍ່ພຽງແຕ່ເປັນມະນຸດທີ່ແທ້ຈິງທີ່ມີຊີວິດຢູ່ເທິງແຜ່ນດິນໂລກນີ້, ແຕ່ພຣະອົງໄດ້ກະທຳຕາມຄວາມຕ້ອງການສຳລັບການໄຖ່ມະນຸດໂດຍການເຮັດຕົວຈິງໃນປວັດສາດ. ແຕ່ຄວາມຈິງທີ່ວ່າພຣະເຢຊູເປັນບຸກຄົນທີ່ແທ້ຈິງໃນປວັດສາດບໍ່ແມ່ນຫຼັກຖານດຽວວ່າພຣະອົງເປັນທາງດຽວທີ່ຈະໄປສວັນ. ພວກເຮົາຍັງມີການທຳງານຂອງພຣະວິນຍານບໍຣິສຸດ "ຜູ້ທີ່ເປັນພຍານ, ເພາະວ່າພຣະວິນຍານເປັນຄວາມຈິງ." ພຣະວິນຍານບໍຣິສຸດໃຫ້ຄວາມຮູ້ສຶກເລິກໆຂ້າງໃນຈິດໃຈຂອງຜູ້ທີ່ເຊື່ອວ່ານີ້ແມ່ນຄວາມຈິງ. ໃນຂໍ້ທີ່ 7-8. ໂຢຮັນໄດ້ອະທິບາຍວ່າຫຼັກຖານທາງປວັດສາດແລະທາງວິນຍານນີ້ສະແດງໃຫ້ເຫັນຢ່າງຊັດເຈນວ່າພຣະເຢຊູຄຣິດເປັນພຣະບຸດຂອງພຣະເຈົ້າ. ລາວໄດ້ສືບຕໍ່ຢືນຢັນໃນຂໍ້ທີ່ 9-10 ວ່າຜູ້ທີ່ເຊື່ອໃນພຣະຄຣິດມີຫຼັກຖານສະແດງຄວາມເປັນຈິງຂອງພຣະຄຣິດຢູ່ໃນຕົວຂອງເຂົາເອງ. ໃນທີ່ສຸດ, ຄວາມເຊື່ອໃນພຣະຄຣິດເປັນການຕັດສິນວ່າຄວາມເຊື່ອນີ້ບໍ່ມີທາງທີ່ຈະພິສູດທາງວິທະຍາສາດ, ແລະການຊົງເປັນຢູ່ຂອງພຣະເຈົ້າກໍບໍ່ສາມາດພິສູດໄດ້ໃນທາງວິທະຍາສາດເພາະວ່າວິທະຍາສາດພຽງແຕ່ມີການກ່ຽວຂ້ອງກັບອົງປະກອບຂອງໂລກເທົ່ານັ້ນ. ແຕ່ຄວາມເຊື່ອຂອງພວກເຮົາບໍ່ແມ່ນຄວາມເຊື່ອຕາບອດ, ແລະມັນບໍ່ແມ່ນຄວາມເຊື່ອທີ່ບໍ່ມີຫຼັກຖານນັບຕັ້ງແຕ່ພຣະເຈົ້າມີຢູ່ແລະໄດ້ເປີດເຜີຍພຣະອົງເອງຕໍ່ມະນຸດ, ການຊົງຢູ່ຂອງພຣະອົງເປັນຕົວແທນຂອງຄວາມເປັນຈິງ. ເມື່ອພວກເຮົາອ່ານແລະເຂົ້າໃຈການບັນທຶກປວັດສາດຈາກການເປີດເຜີຍຂອງພຣະອົງ, ແລະພວກເຮົາພົບກັບພຣະເຈົ້າໃນຄວາມສັມພັນສ່ວນຕົວ, ພວກເຮົາມີຫຼັກຖານທີ່ເຂັ້ມແຂງທີ່ສຸດວ່າສິ່ງທີ່ພຣະຄັມພີເວົ້າກ່ຽວກັບພຣະຄຣິດ-ພຣະອົງເປັນທາງດຽວກັບຄືນຫາພຣະເຈົ້າ-ນັ້ນເປັນຄວາມຈິງ. ຫຼັກຖານແມ່ນຢູ່ໃນຊີວິດທີ່ປ່ຽນແປງໂດຍກິຈການຂອງພຣະຄຣິດ.

*ທ່ານສລຸບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າໄດ້ແນວໃດ?*

**3. 1 ໂຢຮັນ 5: 11-13**

*11. ນີ້ແຫລະ, ເປັນພຍານຫຼັກຖານນັ້ນຄືວ່າພຣະເຈົ້າໄດ້ຊົງໂຜດປະທານ ຊີວິດອັນຕລອດໄປເປັນນິດໃຫ້ເຮົາທັງຫຼາຍ ແລະຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງ. 12. ຜູ້ທີ່ມີພຣະບຸດກໍມີຊີວິດ ຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ. 13. ຂໍ້ຄວາມເຫຼົ່ານີ້ເຮົາຂຽນມາເຖິງເຈົ້າທັງຫຼາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫຼາຍຈະໄດ້ຮູ້ວ່າ ພວກເຈົ້າມີຊີວິດອັນຕລອດໄປເປັນນິດ.*

ຕລອດການສຶກສານີ້, ຂ້າພະເຈົ້າໄດ້ຊີ້ໃຫ້ເຫັນສີ່ປະເພດພື້ນຖານຂອງຄວາມເຊື່ອທີ່ບໍ່ຖືກຕ້ອງ (ມຸມມອງໂລກ), ແລະທຸກໆສາສນາ, ກຸ່ມສອນປອມ, ແລະປຣັຊຍາທີ່ມີຢູ່ແມ່ນສະແດງອອກໃນສີ່ຢ່າງນັ້ນ-ແລະທັງໝົດເຫຼົ່ານີ້ມີຄວາມເຊື່ອສະເພາະ. ແຕ່ໃນການວິເຄາະສຸດທ້າຍ, ທັງໝົດມັນຖືກແຕກຫັກເພາະວ່າມັນບໍ່ສາມາດມີຂໍ້ມູນຮັບຮອງຄວາມເຊື່ອຂອງພວກເຂົາໄດ້ໂດຍໃຊ້ຄວາມຕ້ອງການທາງທິສດີຂອງຕົນເອງ. ເພາະວ່າພຣະເຢຊູເປັນພຣະເຈົ້າທີ່ເກີດມາແທ້ໆແລະໄດ້ສິ້ນພຣະຊົນເທິງໄມ້ກາງແຂນຢ່າງຕັ້ງໃຈແລະໄດ້ເປັນຄືນມາຈາກຕາຍ. ພຣະອົງພຽງຜູ້ດຽວທີ່ໄດ້ພິສູດວ່າເປັນຜູ້ໃຫ້ຊີວິດນິຣັນ. ແລະໄດ້ຮັບການຢືນຢັນເມື່ອເຮົາເຂົ້າໄປມີສາຍສັມພັນກັບພຣະອົງ. ໃນຂນະທີ່ຄວາມເຊື່ອຈາກທຸກໆມຸມມອງໂລກທີ່ແຕກຕ່າງທີ່ມີຢູ່ໃນຍຸກພຣະສັນຍາໃໝ່, ມັນມີກຸ່ມນຶ່ງທີ່ຄວາມເຊື່ອບໍ່ຖືກຕ້ອງໂດຍສະເພາະ(ຜູ້ທີ່ບໍ່ເຊື່ອການຊົງເປັນຢູ່ຂອງພຣະເຈົ້າ)ທີ່ຖືກສົ່ງເສີມໃນບັນດາຄຣິສະຕຽນທີ່ໂຢຮັນກໍາລັງເວົ້າເຖິງ. **ຜູ້ທີ່ບໍ່ເຊື່ອວ່າພຣະເຈົ້າຊົງເປັນຢູ່**ໄດ້ສອນວ່າມີລະດັບຕ່າງໆຂອງພຣະເຈົ້າຢູ່ໃນໂລກຈັກກະວານ, ແລະການໄດ້ຮັບຄວາມສຸກແລະການຊີ້ນໍາຂອງພວກເຂົາແມ່ນຕ້ອງການມີຄວາມຮູ້ພິເສດທີ່ມີພຽງແຕ່ຜູ້ທໍານວາຍຮູ້ໄດ້. ດັ່ງນັ້ນ, ພວກເຂົາຈຶ່ງສອນວ່າຄວາມລອດແມ່ນຈະພົບເຫັນພຽງແຕ່ໃນຄວາມຮູ້ລຶກລັບທີ່ສອນໂດຍຄູສອນ. ໂຢຮັນໄດ້ໂຕ້ແຍ້ງການສອນຂອງຜູ້ທີ່ບໍ່ເຊື່ອນີ້ໂດຍການຢືນຢັນວ່າຄວາມລອດບໍ່ໄດ້ພົບເຫັນຢູ່ໃນການສອນຂອງຜູ້ບໍ່ເຊື່ອ, ແຕ່ມີຢູ່ໃນພຣະເຢຊູຄຣິດເທົ່ານັ້ນ. ຄວາມລອດມີຄວາມສັມພັນແລະບໍ່ມີຫຍັງກ່ຽວຂ້ອງກັບຄວາມຮູ້ພິເສດທີ່ໄດ້ຮັບໂດຍການຟັງຈາກຄຣູສອນປອມນັ້ນ. ໃນທີ່ສຸດ, ໃນ 1 ໂຢຮັນ 5:13, ກ່າວວ່າ "ຂ້າພະເຈົ້າໄດ້ຂຽນສິ່ງເຫຼົ່ານີ້ມາເຖິງທ່ານຜູ້ເຊື່ອໃນພຣະນາມຂອງພຣະບຸດຂອງພຣະເຈົ້າ, ເພື່ອວ່າທ່ານຈະຮູ້ວ່າທ່ານມີຊີວິດນິລັນດອນ." ໂຢຮັນຮັບຮູ້ວ່າມີໝາປ່າທາງວິນຍານເດີນອ້ອມຮອບບັນດາຜູ້ເຊື່ອທີ່ພຍາຍາມເຮັດໃຫ້ພວກເຂົາເຊື່ອຂ່າວປະເສີດປອມ, ລາວຢາກໃຫ້ຊາວຄຣິສະຕຽນເຂົ້າໃຈຈະແຈ້ງວ່າຄວາມຈິງຂອງຂ່າວປະເສີດບໍ່ໄດ້ພົບເຫັນຢູ່ໃນຄໍາສອນປອມທີ່ບໍ່ຖືກຕ້ອງ, ມີພຽງແຕ່ເຊື່ອໃນພຣະນາມຂອງພຣະບຸດຂອງພຣະເຈົ້າເທົ່ານັ້ນ.

## ນໍາໃຊ້ໃນຊີວິດ

ເພາະພຣະເຢຊູເປັນພຣະບຸດຂອງພຣະເຈົ້າ, ພຣະອົງພຽງຜູ້ດຽວທີ່ສາມາດນໍາເຮົາໄປສູ່ພຣະເຈົ້າ. ຈົ່ງເລືອກນຶ່ງໃນການນໍາໃຊ້ຕໍ່ໄປນີ້.

- **ເຊື່ອວາງໃຈ.** ວາງໃຈພຣະເຈົ້າສໍາລັບການປ່ຽນແປງມະຫັສຈັນຂອງຊີວິດ, ຖ້າທ່ານຢາກຮູ້ວິທີຈະເປັນຜູ້ຕິດຕາມຂອງພຣະຄຣິດ, ຈົ່ງເວົ້າລົມກັບຜູ້ນໍາກຸ່ມຂອງທ່ານ,
- **ບົ່ງຕົວ.** ບົ່ງຕົວຄວາມພິເສດຂອງແຕ່ລະຄວາມເຊື່ອໂດຍຮຽນຮູ້ຄວາມເຊື່ອຂອງກຸ່ມທັມມະຊາດ. ກຸ່ມເຊື່ອວິນຍານຕ່າງໆ, ກຸ່ມເຊື່ອວ່າທຸກຢ່າງເປັນພຣະເຈົ້າ, ແລະກຸ່ມທີ່ບໍ່ແມ່ນຄຣິສຕຽນ. ໃນຂນະທີ່ທ່ານສຶກສາ, ຈົດຈຸດສະເພາະທີ່ເປັນຄວາມເຊື່ອຂອງພວກເຂົາ.
- **ປ້ອງກັນ.** ຖ້າທ່ານຮູ້ຈັກກັບຜູ້ທີ່ຕໍ່ວ່າກ່ຽວກັບລັກສນະສະເພາະຂອງຄຣິສະຕຽນ, ຄົ້ນຄວ້າສອບຖາມເບິ່ງວ່າພວກເຂົາເຊື່ອໃນລະບົບໃດ. ເຂົ້າຮ່ວມການສົນທະນາກ່ຽວກັບຄວາມເຊື່ອຂອງລາວ, ຕໍ່ຈາກນັ້ນປຽບທຽບກັບຄວາມຈິງສະເພາະຂອງຄຣິສະຕຽນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**